ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission




# 2019

# ບົດລາຍງານປະຈຳປີ

# ANNUAL REPORT

# ບົດຄຳເຫັນຂອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ວິໄສທັດຮອດປີ 2030 ກ່ຽວກັບການພັດທະນາຕະຫຼາດທຶນຂອງ ສປປ ລາວ ແມ່ນ:
“ເປັນຂໍກະແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ”



ເພື່ອບັນລຸວິໄສທັດຮອດປີ 2030 ແລະ ແຜນພັດທະນາຕະຫຼາດທຶນ 5 ປີ (2016-2020) ໃນການພັດທະນາຕະຫຼາດທຶນຂອງ ສປປ ລາວ, ໃນປີ 2019 ສຄຄຊ ຮ່ວມກັບພາກສ່ວນກ່ຽວຂ້ອງ ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ, ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍວ່າດ້ວຍຫຼັກຊັບ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີຄວາມໜັກແໜ້ນ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ, ສ້າງເງື່ອນໄຂສະດວກໃຫ້ບັນດາບໍລິສັດ ຫຼື ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ປະກອບສ່ວນລົງທຶນໃນຕະຫຼາດທຶນ ແລະ ເຮັດໃຫ້ນິຕິກຳຂອງ ສປປ ລາວ ສອດຄ່ອງກັບຫຼັກການຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ເທື່ອລະກ້າວ.

ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດ, ລັດຖະບານໄດ້ເຫັນດີໃຫ້ ລັດວິສາຫະກິດນຳໃຊ້ຄັງຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດ ເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ ເປັນຕົ້ນດ້ານການຈັດຕັ້ງ, ການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານ ແນໃສ່ໃຫ້ລັດວິສາຫະກິດມີຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ. ພ້ອມດຽວກັນນີ້, ເພື່ອສ້າງສິ່ງຈູງໃຈໃຫ້ແກ່ບໍລິສັດຈົດທະບຽນ ສະພາແຫ່ງຊາດໄດ້ຫຼຸດອາກອນກຳໄລຈາກ 19% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງໃຫ້ແກ່ບໍລິສັດຈົດທະບຽນ ນັບແຕ່ມື້ຈົດທະບຽນເປັນຕົ້ນໄປ ເຊິ່ງມີຜົນບັງຄັບໃຊ້ ປີ 2020 ເປັນຕົ້ນໄປ.

ຕິດພັນກັບການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ, ສຄຄຊ ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງທົບທວນນິຕິກຳ ແລະ ໄລຍະເວລາຂ້າມຜ່ານສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ເພື່ອໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງ ສປປ ລາວ; ໄດ້ສ້າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ (Corporate Governance Guideline: CG Guideline) ພ້ອມທັງ ໄດ້ລົງເຜີຍແຜ່ນິຕິກຳທີ່ຈຳເປັນ ໃຫ້ແກ່ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດຈົດທະບຽນ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງພວກກ່ຽວ ແນໃສ່ປົກປ້ອງຜົນປະໂຫຍດຂອງຜູ້ຖືຮຸ້ນ.

ສຳລັບສະຖາບັນສື່ກາງດ້ານຫຼັກຊັບ, ສຄຄຊ ໄດ້ຮັບຮອງບໍລິສັດປະເມີນມູນຄ່າຊັບສິນເພີ່ມເຕີມ ເພື່ອປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ; ໄດ້ສຳເລັດການພັດທະນາລະບົບສົ່ງຂໍ້ມູນລາຍງານທາງອີເລັກໂທຣນິກສຳລັບບໍລິສັດຫຼັກຊັບ ເຊິ່ງຊ່ວຍເຮັດໃຫ້ການລາຍງານ ແລະ ວິເຄາະຂໍ້ມູນ ມີຄວາມວ່ອງໄວ ແລະ ຊັດເຈນຍິ່ງຂຶ້ນ; ໄດ້ສຳເລັດ

ແລະ ນຳໃຊ້ຫຼັກການຄຸ້ມຄອງບໍລິສັດຫຼັກຊັບຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision) ເພື່ອໃຫ້ການຄຸ້ມຄອງບໍລິສັດຫຼັກຊັບມີຄວາມຄ່ອງຕົວ ແລະ ມີປະສິດທິພາບຫຼາຍຂຶ້ນ.

ໃນສ່ວນຂອງຜະລິດຕະພັນຫຼັກຊັບ, ສຄຄຊ ໄດ້ສຳເລັດການຄົ້ນຄວ້າຜະລິດຕະພັນໃໝ່ຄື: ການນຳເອົາຮຸ້ນໄປເປັນຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດ (Depository Receipt: DR) ເພື່ອຊ່ວຍສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຄອງຮຸ້ນ. ພ້ອມນີ້, ໄດ້ສືບຕໍ່ປັບປຸງສິ່ງອຳນວຍຄວາມສະດວກໃນການຊື້-ຂາຍພັນທະບັດໃນຕະຫຼາດຫຼັກຊັບລາວ.

ຄຽງຄູ່ກັນນີ້, ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສຳຄັນວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ໂດຍໄດ້ປັບປຸງ ເນື້ອໃນ ແລະ ຮູບແບບການໂຄສະນາເພື່ອໃຫ້ແທດເໝາະກັບກຸ່ມເປົ້າໝາຍ, ໄດ້ສ້າງສະປັອດໂຄສະນາ ແລະ ກາຕູນເອນິເມຊັນ ເພື່ອເປັນເຄື່ອງມືສື່ສານທີ່ໜ້າສົນໃຈ ແລະ ເຂົ້າໃຈງ່າຍ ກ່ຽວກັບວຽກງານຕະຫຼາດທຶນ ສຳລັບມວນຊົນ.

ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ໂດຍໄດ້ຈັດສຳມະນາໃນຫົວຂໍ້ຕ່າງໆຢູ່ພາຍໃນປະເທດ ແລະ ເຂົ້າຮ່ວມຝຶກອົບຮົມ, ຝຶກງານຕົວຈິງ (On-the-job-training) ຢູ່ຕ່າງປະເທດ. ນອກຈາກນີ້, ສຄຄຊ ໄດ້ຖືໂອກາດຈາກການເຂົ້າເປັນສະມາຊິກສຳຮອງຂອງອົງການ IOSCO ເພື່ອເຂົ້າຮ່ວມກອງປະຊຸມ ແລະ ສຳມະນາໃນລະດັບຕ່າງໆ ເຊິ່ງໄດ້ສ້າງໂອກາດໃຫ້ພະນັກງານ ສຄຄຊ ໄດ້ຮຽນຮູ້ສິ່ງໃໝ່ໆ ເພື່ອນຳມາປັບປຸງນິຕິກຳ ແລະ ສ້າງແນວທາງໃນການຄຸ້ມຄອງວຽກງານຫຼັກຊັບໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ.

ສຳລັບການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ເຫັນວ່າມີປະສິດທິພາບ ແລະ ສາມາດສະກັດກັ້ນການກະທຳຜິດໄດ້ຫຼາຍຂຶ້ນ ເຊິ່ງໃນປີຜ່ານມາ ສຄຄຊ ໄດ້ປະຕິບັດມາດຕະການສຶກອົບຮົມຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຈຳນວນ 3 ກໍລະນີ ແລະ ໄດ້ປະຕິບັດມາດຕະການປັບໃໝ ຈຳນວນ 4 ກໍລະນີ.

ສຳລັບປີ 2020 ຄາດວ່າການພັດທະນາຕະຫຼາດທຶນ ສປປ ລາວ ຈະປະເຊີນທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ. ສະນັ້ນ, ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນງານ-ໂຄງການໃນການພັດທະນາຕະຫຼາດທຶນ ສປປ ລາວ ປະຈຳປີ 2020 ໃຫ້ບັນລຸຕາມລະດັບຄາດໝາຍ, ສຄຄຊ ຕ້ອງໄດ້ສືບຕໍ່ເອົາໃຈໃສ່ ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວ; ສະເໜີລັດຖະບານພິຈາລະນາຍົກເວັ້ນການເກັບຄ່າທຳນຽມຊື້-ຂາຍຮຸ້ນໃນສ່ວນຂອງລັດຖະບານ; ສະເໜີສະພາແຫ່ງຊາດ ເພື່ອຕີຄວາມໝາຍມາດຕາ 82 ຂໍ້ 4 ຂອງກົດໝາຍວ່າດ້ວຍລັດຖະກອນ ກ່ຽວກັບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ຂອງພະນັກງານລັດຖະກອນ; ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອກະກຽມຄວາມພ້ອມຂອງລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ; ປັບປຸງເງື່ອນໄຂການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ເງື່ອນໄຂການຈົດທະບຽນໃນຕະຫຼາດຂັ້ນສອງ ເພື່ອໃຫ້ແທດເໝາະກັບເງື່ອນໄຂຂອງວິສາຫະກິດພາຍໃນປະເທດໃຫ້ຫຼາຍຂຶ້ນ; ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງນິຕິກຳກ່ຽວກັບການຂະຫຍາຍເວລາປະຕິບັດມາດຕະຖານດ້ານການ

ລາຍງານການເງິນ (IFRS) ສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE); ກະກຽມປະເມີນຄວາມພ້ອມການຈັດຕັ້ງປະຕິບັດ CG Guideline ແລະ ຄົ້ນຄວ້າສ້າງບັດປະເມີນການຈັດຕັ້ງປະຕິບັດ CG Guideline; ສືບຕໍ່ຈັດຕັ້ງປະຕິບັດການຄຸ້ມຄອງບໍລິສັດຫຼັກຊັບຕາມແບບຕີລາຄາຄວາມສ່ຽງ; ສືບຕໍ່ຄົ້ນຄວ້າຜະລິດຕະພັນໃໝ່ ທີ່ແທດເໝາະກັບຕະຫຼາດທຶນລາວ; ສືບຕໍ່ຈັດຕັ້ງວຽກງານໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການທີ່ເໝາະສົມ; ສືບຕໍ່ຮ່ວມມື ໃນຮູບແບບສອງຝ່າຍ ແລະ ຫຼາຍຝ່າຍ ຢ່າງເປັນປົກກະຕິ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມສະໝັກເຂົ້າເປັນສະມາຊິກສົມບູນຂອງອົງການ IOSCO ເພື່ອຍົກສູງຖານະບົດບາດວຽກງານຫຼັກຊັບຂອງ ສປປ ລາວ ໃນເວທີສາກົນ.

# ສະຖິຕິສຳຄັນໃນປີ



ປີ 2019 ໄດ້ສ້າງ ແລະ ປັບປຸງນິຕິກຳ **12 ສະບັບ** ປະກອບມີ: ຂໍ້ຕົກລົງ 7 ສະບັບ, ແຈ້ງການ 4 ສະບັບ, ຄຳແນະນຳ 1 ສະບັບ (ປະຈຸບັນ ສຄຄຊ ມີນິຕິກຳທັງໝົດ 65 ສະບັບ)



- ປີ 2019 ມີບໍລິສັດຈົດທະບຽນ ເພີ່ມຂຶ້ນ **2 ແຫ່ງ** (ທັງໝົດມີ 11 ແຫ່ງ);
- ມູນຄ່າລະດົມທຶນຜ່ານການອອກຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ໃນປີ 2019: **1.952 ຕື້ກີບ** ແລະ ຍອດສະສົມທັງໝົດຮອດປັດຈຸບັນ: **19.471 ຕື້ກີບ**).



- ໃນປີ 2019 ນັກວິຊາຊີບທັງໝົດ **73 ຄົນ (ເພີ່ມຂຶ້ນ 4 ຄົນ)** ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 30 ຄົນ, ນັກວິຊາຊີບກວດສອບ 20 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 23 ຄົນ)



- ບໍລິສັດຫຼັກຊັບ **4 ແຫ່ງ**
- ບໍລິສັດກວດສອບ **4 ແຫ່ງ**
- ບໍລິສັດປະເມີນມູນຄ່າຊັບສິນ **9 ແຫ່ງ** (ປີ 2019 ເພີ່ມຂຶ້ນ 7 ແຫ່ງ)
- ທະນາຄານດູແລຊັບສິນ **3 ແຫ່ງ**
- ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື **1ແຫ່ງ**



ບັນຊີຜູ້ລົງທຶນທັງໝົດໃນປີ 2019 **ເພີ່ມຂຶ້ນ 1.317 ຄົນ** (ທັງໝົດມີ **15.353 ຄົນ** ຄື: ພາຍໃນ 12.011 ຄົນ ຕ່າງປະເທດ 3.342 ຄົນ).



- ມູນຄ່າການຊື້-ຂາຍ ໃນປີ 2019 ແມ່ນ **74,01 ຕື້ກີບ** (ທັງໝົດນັບແຕ່ເປີດຕະຫຼາດມີ 1.594 ຕື້ກີບ);
- ມູນຄ່າຕະຫຼາດໃນທ້າຍປີ 2019 ແມ່ນ **9.618 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2019 ປິດຢູ່ທີ່ **728,11 ຈຸດ.**

# ສາລະບານ

I. ສະພາບຕະຫຼາດທຶນ ໃນປີ 2019 ____ 1
1. ສະພາບຕະຫຼາດທຶນຂອງຕ່າງປະເທດ ____ 1
2. ສະພາບຕະຫຼາດທຶນຂອງ ສປປ ລາວ ____ 1
II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2019 ____ 2
1. ອົງການຄຸ້ມຄອງວຽກງານຫຼັກຊັບ ____ 2
1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ____ 2
1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ____ 3
2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2019 ____ 4
2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 4
2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ____ 4
2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 5
2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 5
2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 7
2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 9
2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 9
2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ____ 10
2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ____ 10
2.8 ການຮ່ວມມືສາກົນ ____ 11
3. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ____ 13
3.1 ຂໍ້ສະດວກ ____ 13
3.2 ຂໍ້ຫຍຸ້ງຍາກ ____ 13

III. ທິດທາງແຜນການ ປີ 2020 ____ 14

1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ ____ 14

2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ ____ 14

3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2020 ____ 14

3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ ____ 14

3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 15

3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 15

3.4 ການຄຸ້ມຄອງສະຖາບັນສີ່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 15

3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 15

3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ ____ 16

3.7 ການຮ່ວມມືສາກົນ ____ 16

# I. ສະພາບຕະຫຼາດທຶນ ໃນປີ 2019

## 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ໃນປີ 2019 ທຽບໃສ່ປີ 2018 ໂດຍລວມ ເຫັນວ່າສ່ວນຫຼາຍໄດ້ປັບຕົວດີຂຶ້ນ ເນື່ອງຈາກວ່າ ຜູ້ລົງທຶນເລີ່ມມີຄວາມເຊື່ອໝັ້ນຕໍ່ການພັດທະນາເສດຖະກິດໂລກ ໂດຍສະເພາະແມ່ນການແກ້ໄຂບັນຫາທາງການຄ້າຂອງປະເທດມະຫາອຳນາດ ທີ່ມີຄວາມຄືບໜ້າໄປໃນທິດທາງທີ່ດີຂຶ້ນ, ທະນາຄານກາງ ສ.ອາເມລິກາ (FED) ໄດ້ປັບຫຼຸດອັດຕາດອກເບ້ຍຕໍ່າສຸດທີ່ເຄີຍປະຕິບັດມາ, ທະນາຄານກາງເອີຣົບ (ECB) ໄດ້ປະກາດປັບນະໂຍບາຍຜ່ອນຜັນທາງການເງິນ ແລະ ປັບຫຼຸດນະໂຍບາຍອັດຕາດອກເບ້ຍ Re-Finance ໃນອັດຕາ 0% ເຊິ່ງຕໍ່າທີ່ສຸດໃນປະຫວັດສາດ ແລະ ການເປີດເຜີຍຕົວເລກທາງດ້ານເສດຖະກິດໃນຂະແໜງການຕ່າງໆ ສ່ວນໃຫຍ່ກໍ່ອອກມາດີກວ່າຄາດຄະເນໄວ້ ເຊິ່ງທັງໝົດເຫຼົ່ານີ້ ລ້ວນແຕ່ເປັນການສະໜັບສະໜູນໃຫ້ແກ່ການຂະຫຍາຍຕົວຂອງຕະຫຼາດທຶນ. [1]

## 2. ສະພາບຕະຫຼາດທຶນຂອງ ສປປ ລາວ

ຕະຫຼາດທຶນ ມີຄວາມສຳຄັນໃນການປະກອບສ່ວນພັດທະນາເສດຖະກິດຂອງ ສປປ ລາວ ໂດຍມີພາລະບົດບາດ ແລະ ໜ້າທີ່ຕົ້ນຕໍໃນການຈັດສັນແຫຼ່ງທຶນໄລຍະຍາວ ໃຫ້ແກ່ພາກສ່ວນເສດຖະກິດ ແນໃສ່ປະກອບສ່ວນເຂົ້າໃນການພັດທະນາ ແລະ ຂະຫຍາຍກິດຈະການ ຂອງພາກສ່ວນດັ່ງກ່າວຢ່າງມີປະສິດທິພາບ ທັນໄປສູ່ການບໍລິຫານຢ່າງມືອາຊີບ ພ້ອມທັງ ສ້າງຄວາມສາມາດໃນການແຂ່ງຂັນດ້ານການຜະລິດ, ການຄ້າ ແລະ ການບໍລິການໃຫ້ແກ່ພາກສ່ວນເສດຖະກິດ ບົນພື້ນຖານການສະໜັບສະໜູນການສະໜອງແຫຼ່ງທຶນ ຮ່ວມກັບ ຕະຫຼາດເງິນ.

ຮອດທ້າຍປີ 2019 ວິສາຫະກິດສາມາດລະດົມແຫຼ່ງທຶນໄລຍະຍາວ ໂດຍຜ່ານການອອກຈຳໜ່າຍຮຸ້ນຢູ່ພາຍໃນປະເທດ ແລະ ອອກຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ 19.471 ຕື້ກີບ ກວມເອົາ 11,86% ຂອງ GDP. ແຫຼ່ງທຶນດັ່ງກ່າວໄດ້ປະກອບສ່ວນຢ່າງໃຫຍ່ຫຼວງໃນການຂະຫຍາຍທຸລະກິດ ແລະ ການບໍລິການຂອງວິສາຫະກິດ ໂດຍໄດ້ຖືກນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ເປັນຕົ້ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ປັດຈຸບັນ ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນ 11 ແຫ່ງ ຈາກຫຼາຍຂະແໜງການ ເປັນຕົ້ນ ສະຖາບັນການເງິນ, ໄຟຟ້າ, ກະສິກຳ, ອຸດສະຫະກຳ, ການຄ້າ-ການບໍລິການ ແລະ ອື່ນໆ.

ຄຽງຄູ່ກັນນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄືເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງ ແລະ ປັບປຸງກົນໄກຂອງຕະຫຼາດຫຼັກຊັບ ເພື່ອໃຫ້ສາມາດອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ນັບແຕ່ທ້າຍປີ 2018 ເປັນຕົ້ນມາ. ຮອດທ້າຍປີ 2019 ສາມາດລະດົມທຶນໃຫ້ແກ່ລັດຖະບານ ຜ່ານ ຕລຊລ ແລ້ວຈຳນວນ 1,657 ຕື້ກີບ (ປີ 2019 ຈຳນວນ 1.372 ຕື້ກີບ) ຊຶ່ງກົນໄກດັ່ງກ່າວ ໄດ້ເຮັດໃຫ້ການຂາຍພັນທະບັດລັດຖະບານ ຄ່ອຍໆຫັນເຂົ້າສູ່ລະບົບຕະຫຼາດທຶນ.

---

[1] ຂໍ້ມູນອ້າງອີງ: Capital Group (2020). "ບົດລາຍງານຕະຫຼາດທຶນໂລກ ສຳລັບປີ 2019".

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2019

### 1. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ນັບແຕ່ ຄຄຊ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການໃນ ປີ 2009 ເປັນຕົ້ນມາ, ຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ, ຍຸຕິທຳ ແລະ ຫຼຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ. ໃນການເຄື່ອນໄຫວວຽກງານດັ່ງກ່າວ ໄດ້ປະສານສົມທົບແໜ້ນ ແລະ ໄດ້ຮັບການຮ່ວມມືຈາກບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຢ່າງດີ ເພື່ອພັດທະນາຕະຫຼາດທຶນ ກໍ່ຄື ການພັດທະນາເສດຖະກິດຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວເທື່ອລະກ້າວ.

ສຳລັບໜຶ່ງປີທີ່ຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມ ຄຄຊ ຈຳນວນ 4 ຄັ້ງ ເພື່ອພິຈາລະນາຮັບຮອງເອົາບັນຫາທີ່ສຳຄັນຈຳນວນໜຶ່ງ ເປັນຕົ້ນແມ່ນ ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ, ນິຕິກຳລຸ່ມກົດໝາຍວ່າດ້ວຍຫຼັກຊັບ, ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ການແກ້ໄຂບັນຫາຂອງບໍລິສັດຈົດທະບຽນ, ແຜນການປັບປຸງ ແລະ ພັດທະນາຕະຫຼາດຫຼັກຊັບລາວ ແລະ ບັນຫາສຳຄັນອື່ນໆ. ນອກຈາກນີ້, ໃນປີ 2019 ໄດ້ປັບປຸງຄະນະກຳມະການ ຄຄຊ ຈຳນວນ 3 ທ່ານ. ປະຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 13 ທ່ານ (ຕາມແຜນວາດ 1).

ແຜນວາດ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ



## 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງ ກໍ່ຄື ການເປັນເສນາທິການໃຫ້ແກ່ ຄຄຊ ໃນການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຫຼັກຊັບ ບົນພື້ນຖານການປະສານສົມທົບ ແລະ ເຮັດວຽກຮ່ວມກັບບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ວຽກງານຄຸ້ມຄອງຫຼັກຊັບມີປະສິດທິພາບ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ໄດ້ກຳນົດໄວ້. ພ້ອມນີ້ ໃນປີຜ່ານມາ ສຄຄຊ ໄດ້ປັບປຸງການຈັດຕັ້ງ ຈຳນວນ 7 ຄັ້ງ ເພື່ອໃຫ້ແທດເໝາະກັບການຂະຫຍາຍຕົວຂອງວຽກງານໃນໄລຍະໃໝ່ ແລະ ຄວາມສາມາດຕົວຈິງຂອງພະນັກງານ. ຮອດປັດຈຸບັນ, ສຄຄຊ ມີພະນັກງານທັງໝົດ 44 ທ່ານ (ຍິງ 21 ທ່ານ) ໃນນີ້ ປະກອບດ້ວຍຄະນະ ສຄຄຊ 4 ທ່ານ, ຄະນະພະແນກ 10 ທ່ານ ແລະ ວິຊາການ 30 ທ່ານ. ໂຄງຮ່າງການຈັດຕັ້ງຂອງ ສຄຄຊ ປະກອບດ້ວຍ 6 ພະແນກ (ຕາມແຜນວາດ 2).

ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງ ສຄຄຊ






## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2019

ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກວິຊາສະເພາະຂອງຕົນຢ່າງຕັ້ງໜ້າ, ເປັນລະບົບ, ມີແຜນການຢ່າງລະອຽດ ແລະ ມີການຕິດຕາມການເຄື່ອນໄຫວຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ເຊິ່ງສາມາດສັງລວມໄດ້ດັ່ງນີ້:

### 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

#### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ສຄຄຊ ໄດ້ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງ ແລະ ຮັບໃຊ້ໃຫ້ແກ່ການຄຸ້ມຄອງການເຄື່ອນໄຫວ ແລະ ການຕິດຕາມກວດກາວຽກງານຫຼັກຊັບໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ. ໃນປີ 2019 ສຄຄຊ ໄດ້ສຳເລັດການຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນປັດຈຸບັນ ແລະ ສອດຄ່ອງກັບຫຼັກການຂອງພາກພື້ນ ແລະ ສາກົນ ໂດຍໄດ້ຮັບການຮັບຮອງຈາກກອງປະຊຸມສະພາແຫ່ງຊາດ ສະໄໝສາມັນເທື່ອທີ 8 ໃນວັນທີ 3 ທັນວາ 2019. ນອກນີ້, ກໍ່ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳ ຈຳນວນ 7 ສະບັບ (ສ້າງໃໝ່ 3, ປັບປຸງ 4) ພ້ອມທັງ ອອກແຈ້ງການ 4 ສະບັບ ແລະ ຄຳແນະນຳ 1 ສະບັບ ລາຍລະອຽດຕາມຕາຕະລາງ 1.

ຕາຕະລາງ 1: ສັງລວມນິຕິກຳໃນຂົງເຂດວຽກງານຫຼັກຊັບ (ສຄຄຊ) ທີ່ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 2019

| ລຳດັບ | ລາຍຊື່ນິຕິກຳ |
|---|---|
| 1 | ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ (ປັບປຸງ) (ຕິດພັນກັບຄຳສັ່ງ 02/ນຍ[2]) |
| 2 | ຂໍ້ຕົກລົງວ່າດ້ວຍ ການຮັບຮອງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ (CG Guideline) (ໃໝ່) (ຕິດພັນກັບຄຳສັ່ງ 02/ນຍ[4]) |
| 3 | ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ (ປັບປຸງ) (ຕິດພັນກັບຄຳສັ່ງ 02/ນຍ[4]) |
| 4 | ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການເຄື່ອນໄຫວທຸລະກິດບໍລິສັດບໍລິຫານຊັບສິນ (ໃໝ່) |
| 5 | ຂໍ້ຕົກລົງວ່າດ້ວຍ ກອງທຶນຮ່ວມ (ໃໝ່) |
| 6 | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ (ປັບປຸງ) |
| 7 | ຂໍ້ຕົກລົງວ່າດ້ວຍ ທະນາຄານດູແລຊັບສິນ (ປັບປຸງ) |
| 8 | ແຈ້ງການໃຫ້ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອແຕ່ງຕັ້ງບໍລິສັດຫຼັກຊັບເພື່ອເປັນທີ່ປຶກສາທາງດ້ານການເງິນ (ໃໝ່); |
| 9 | ແຈ້ງການກ່ຽວກັບຄ່າຄຸ້ມຄອງປະຈຳປີຂອງນັກກວດສອບກ່ຽວກັບວຽກງານຫຼັກຊັບ (ໃໝ່); |
| 10 | ແຈ້ງການເຖິງຕະຫຼາດຫຼັກຊັບໃຫ້ສະໜອງຂໍ້ມູນເອກະສານລາຍງານການເງິນໃນຮູບແບບ Microsoft Excel File (ໃໝ່); |
| 11 | ແຈ້ງການກ່ຽວກັບການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ (ໃໝ່); |
| 12 | ຄຳແນະນຳກ່ຽວກັບການຈັດກອງປະຊຸມຜູ້ຖືຮຸ້ນ (ປັບປຸງ) (ຕິດພັນກັບຄຳສັ່ງ 02/ນຍ[4]). |

ຮອດປັດຈຸບັນ, ສຄຄຊ ມີນິຕິກຳທັງໝົດ ຈຳນວນ 65 ສະບັບ ແລະ ຕລຊລ ມີຈຳນວນ 10 ສະບັບ.

[2] ຄຳສັ່ງ 02/ນຍ: ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດ ລັດຖະບານໄດ້ເຫັນດີໃຫ້ ລັດວິສາຫະກິດນຳໃຊ້ຄັງຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດ ເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ ເປັນຕົ້ນ ດ້ານການຈັດຕັ້ງ, ການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານ ແນໃສ່ໃຫ້ລັດວິສາຫະກິດມີຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ. ນອກຈາກນັ້ນ, ສຄຄຊ ຍັງໄດ້ຄົ້ນຄວ້າສະເໜີຕໍ່ລັດຖະບານ ເພື່ອຫຼຸດອາກອນກຳໄລ ໃຫ້ແກ່ບໍລິສັດຈົດທະບຽນ ຈາກອັດຕາ 19% ເປັນເວລາ 4 ປີ ມາເປັນ 13% ເປັນເວລາ 4 ປີ ພາຍຫຼັງເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງນະໂຍບາຍດັ່ງກ່າວຈະເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນໄປ.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

❖ **ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ**

ໃນປີ 2019, ບໍລິສັດສາມາດລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນຢູ່ພາຍໃນ ແລະ ຮຸ້ນກູ້ຢູ່ຕ່າງປະເທດ ລວມທັງໝົດ 1.952 ຕື້ກີບ ຫຼຸດລົງ 55,64% ທຽບກັບປີ 2018. ໃນນັ້ນ, ລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ຈຳນວນ 2 ກໍລະນີ ລວມມູນຄ່າ 332 ຕື້ກີບ ເພີ່ມຂຶ້ນ ເກືອບ 4 ເທົ່າຈາກປີຜ່ານມາ (68 ຕື້ກີບ ໃນປີ 2018) ແລະ ລະດົມທຶນຢູ່ຕ່າງປະເທດ ດ້ວຍການອອກຈຳໜ່າຍຮຸ້ນກູ້ 1 ກໍລະນີ ມູນຄ່າ 1.620 ຕື້ກີບ ເຊິ່ງເຫັນວ່າຫຼຸດລົງ 70% ຈາກປີຜ່ານມາ (5.349 ຕື້ກີບ ໃນປີ 2018).

ຕາຕະລາງທີ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2019.

ຫົວໜ່ວຍ: ຕື້ກີບ

| ປີ | 2010 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | ລວມ |
|---|---|---|---|---|---|---|---|---|---|---|
| ລະດົມທຶນພາຍໃນ | 1.237 | 1.611 | 40 | 240 | 2.832 | - | 458 | 68 | 332 | 6.819 |
| ລະດົມທຶນຢູ່ຕ່າງປະເທດ | - | - | - | 1.625 | - | 2.558 | 1.500 | 5.349 | 1.620 | 12.653 |
| **ລວມ** | **1.237** | **1.611** | **40** | **1.865** | **2.832** | **2.558** | **1.958** | **5.418** | **1.952** | **19.471** |

ແຜນວາດ 3: ຍອດສະສົມການລະດົມທຶນ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2019



ໂດຍລວມແລ້ວ, ນັບແຕ່ປີ 2010-2019 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ລວມທັງໝົດ 19.471 ຕື້ກີບ ກວມເອົາ 11,86% ຂອງ GDP. ທຶນທີ່ລະດົມໄດ້ດັ່ງກ່າວ ວິສາຫະກິດໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ຮອດທ້າຍປີ 2019, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ມີທັງໝົດ 11 ບໍລິສັດ (ເພີ່ມຂຶ້ນຈາກ 9 ບໍລິສັດໃນປີຜ່ານມາ). (ລາຍຊື່ບັນດາບໍລິສັດຈົດທະບຽນ ຢູ່ໃນເອກະສານຊ້ອນທ້າຍ 1)

ຮູບພາບ: ພິທີເປີດການຊື້-ຂາຍຮຸ້ນມື້ທຳອິດຂອງບໍລິສັດຈົດທະບຽນໃໝ່






ຄຽງຄູ່ກັນນີ້, ເພື່ອຊຸກຍູ້ສົ່ງເສີມບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນ ຕລຊລ, ສຄຄຊ ໄດ້ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄັດເລືອກເອົາວິສາຫະກິດທີ່ລັດລົງທຶນຈຳນວນໜຶ່ງ ເພື່ອປະເມີນ ແລະ ກະກຽມຄວາມພ້ອມຮອບດ້ານໃນການອອກຈຳໜ່າຍຫຼັກຊັບ ເຊິ່ງລັດຖະບານໄດ້ເຫັນດີໃຫ້ນຳໃຊ້ຄັງຕ່າງໆຂອງວິສາຫະກິດມາສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດທີ່ລັດລົງທຶນ ກໍລະນີມີຄວາມຕ້ອງການຢາກເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດຈົດທະບຽນ ໃນແຕ່ລະໄລຍະຢ່າງໃກ້ຊິດ ໂດຍສະເພາະ ແມ່ນຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການຈ່າຍເງິນປັນຜົນ, ການນຳໃຊ້ທຶນທີ່ລະດົມໄດ້ ແລະ ອື່ນໆ ຢ່າງເປັນປົກກະຕິ. ພ້ອມທັງ ໄດ້ປະຕິບັດມາດຕະການຕໍ່ບໍລິສັດຈົດທະບຽນຈຳນວນ 4 ກໍລະນີ ທີ່ບໍ່ສາມາດເປີດເຜີຍ ແລະ ລາຍງານໄດ້ຕາມລະບຽບການກຳນົດ.

ເພື່ອຮັບປະກັນໃຫ້ບໍລິສັດຈົດທະບຽນສ້າງເອກະສານລາຍງານການເງິນຂອງຕົນໃຫ້ສອດຄ່ອງກັບມາດຕະຖານສາກົນ , ສຄຄຊ ໄດ້ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດ IFRS ໃນການລາຍງານການເງິນຂອງບໍລິສັດຈົດທະບຽນ ໂດຍອີງຕາມແຈ້ງການ ສະບັບເລກທີ 014/ຄຄຊ ລົງວັນທີ 25 ທັນວາ 2013 ແລະ ກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 14 ເຊິ່ງເຫັນວ່າ ບໍລິສັດຈົດທະບຽນສ່ວນຫຼາຍບໍ່ສາມາດປະຕິບັດຕາມແຈ້ງການດັ່ງກ່າວໄດ້ ເນື່ອງຈາກວ່າ ການຂ້າມຜ່ານຈາກລະບົບບັນຊີລາວໄປສູ່ IFRS ມີຄວາມສັບສົນ ແລະ ມີຫຼາຍບັນຫາຕ້ອງໄດ້ປັບປຸງແກ້ໄຂ. ພ້ອມນີ້, ການຈັດຕັ້ງປະຕິບັດ IFRS ແມ່ນມີຕົ້ນທຶນສູງ ເປັນຕົ້ນຄ່າໃຊ້ຈ່າຍໃນການຝຶກອົບຮົມພະນັກງານ, ວ່າຈ້າງຊ່ຽວຊານ, ການສ້າງບົດວິເຄາະຊ່ອງຫວ່າງ ແລະ ອື່ນໆ. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ມີບໍລິສັດຈົດທະບຽນ 1 ແຫ່ງ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ນຳໃຊ້ IFRS ນັບແຕ່ປີ 2014 ເປັນຕົ້ນມາ ເຊິ່ງສາມາດຈັດຕັ້ງປະຕິບັດໄດ້ບາງສ່ວນ. ສະນັ້ນ, ເພື່ອເປັນການຊຸກຍູ້ໃຫ້ບໍລິສັດຈົດທະບຽນສາມາດ

ຈັດຕັ້ງປະຕິບັດ IFRS ໃນການລາຍງານການເງິນຂອງຕົນໄດ້ ສຄຄຊ ໂດຍການປະສານສົມທົບກັບ ກະຊວງການເງິນ ແລະ ກຸ່ມທະນາຄານໂລກ ໄດ້ວິເຄາະຊ່ອງຫວ່າງ ແລະ ກໍານົດແຜນຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS ສໍາລັບຂະແໜງຫຼັກຊັບ, ທະນາຄານ ແລະ ປະກັນໄພ ຢູ່ ສປປ ລາວ ພ້ອມທັງ ທົບທວນໄລຍະຂ້າມຜ່ານສູ່ IFRS ຄືນໃໝ່ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ.

ພ້ອມນີ້, ໃນປີ 2019 ສຄຄຊ ໄດ້ສໍາເລັດການສ້າງຄໍາແນະນໍາກ່ຽວກັບການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ (CG Guideline) ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ໂດຍໄດ້ກໍານົດເປັນຄໍາແນະນໍາສະເພາະກ່ຽວກັບຫຼັກການຄຸ້ມຄອງບໍລິຫານທີ່ຈໍາເປັນ. ໃນນີ້, ໄດ້ກໍານົດແນວທາງໃນການຈັດຕັ້ງປະຕິບັດສໍາລັບ ຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະອໍານວຍການ ແລະ ຫົວໜ້າໜ່ວຍງານຕ່າງໆ ຂອງບໍລິສັດຈົດທະບຽນ ໃຫ້ເຄື່ອນໄຫວວຽກງານຢ່າງມີປະສິດທິພາບ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທໍາ ພ້ອມທັງ ຍົກສູງການປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ບໍລິສຸດສັດຊື່ ເພື່ອຜົນປະໂຫຍດໂດຍລວມຂອງບໍລິສັດ ເວົ້າສະເພາະ ກໍ່ເພື່ອຮັກສາຜົນປະໂຫຍດຂອງຜູ້ຖືຮຸ້ນທັງໝົດ. ພ້ອມນີ້ ຍັງໄດ້ຄົ້ນຄວ້າເຄື່ອງມືໃນການຕິດຕາມກວດກາການຈັດຕັ້ງປະຕິບັດຫຼັກການດັ່ງກ່າວອີກດ້ວຍ. ຜ່ານການປະຕິບັດຕົວຈິງ ເຫັນວ່າ ຜູ້ບໍລິຫານຂອງບໍລິສັດຈົດທະບຽນ ໄດ້ຄ່ອຍຮັບຮູ້ ແລະ ເຂົ້າໃຈ ພ້ອມທັງ ເຫັນຄວາມສໍາຄັນຂອງວຽກງານ CG ຫຼາຍຍິ່ງຂຶ້ນ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

### ❖ ການຄຸ້ມຄອງຕະຫຼາດຫຼັກຊັບ

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານປະຈໍາເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ປະຈໍາປີ 2019 ຈໍານວນ 1 ຄັ້ງ ໂດຍລົງເລິກ ລະບົບການຊື້-ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕລຊລ ເຊິ່ງຜ່ານການກວດກາຕົວຈິງ ເຫັນວ່າ ການເຄື່ອນໄຫວຂອງ ຕລຊລ ສອດຄ່ອງກັບລະບຽບການ.

ໃນສ່ວນຂອງຜະລິດຕະພັນຫຼັກຊັບ ສຄຄຊ ໄດ້ສໍາເລັດການຄົ້ນຄວ້າຜະລິດຕະພັນໃໝ່ ຄື: ການນໍາເອົາຮຸ້ນໄປເປັນຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດ (Depository Receipt: DR) ເພື່ອຊ່ວຍສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຄອງຮຸ້ນ. ພ້ອມນີ້, ໄດ້ສືບຕໍ່ປັບປຸງສິ່ງອໍານວຍຄວາມສະດວກໃນການຊື້-ຂາຍພັນທະບັດລັດຖະບານ ຜ່ານຕະຫຼາດຫຼັກຊັບລາວ ເຊິ່ງໃນປີ 2019 ສາມາດຂາຍໄດ້ 1.372 ຕື້ກີບ (ມູນຄ່າຂາຍ ຮອດທ້າຍປີ 2019 ແມ່ນ 1.657 ຕື້ກີບ).

### ❖ ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ໄດ້ເອົາໃຈໃສ່ຕິດຕາມການເຄື່ອນໄຫວຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ ຢ່າງໃກ້ຊິດ. ໃນທ້າຍປີ 2019 ດັດຊະນີຕະຫຼາດຫຼັກຊັບລາວ ປິດຢູ່ທີ່ 728,11 ຈຸດ ຫຼຸດລົງ 12,95% ທຽບໃສ່ດັດຊະນີຂອງ ທ້າຍປີ 2018 ທີ່ຜ່ານມາ ໂດຍມີມູນຄ່າການຊື້-ຂາຍທັງໝົດ 74,01 ຕື້ກີບ ຫຼຸດລົງ 20,14% ເມື່ອທຽບໃສ່ປີ 2018 ໃນນັ້ນເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 47,49% ຖ້າທຽບໃສ່ປີຜ່ານມາ ແມ່ນຜູ້ລົງທຶນພາຍໃນປະເທດເຂົ້າມາຊື້-ຂາຍຮຸ້ນເພີ່ມຂຶ້ນ. ສາເຫດທີ່ດັດຊະນີຕະຫຼາດຫຼັກຊັບປັບຕົວຫຼຸດລົງ ເມື່ອທຽບກັບປີຜ່ານມາ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນຂອງບໍລິສັດ PTL, EDL-GEN ແລະ PCD. ການປັບຕົວຫຼຸດລົງຂອງລາຄາຮຸ້ນດັ່ງກ່າວ ສາເຫດຕົ້ນຕໍ ແມ່ນເນື່ອງມາຈາກສະພາບເສດຖະກິດໂດຍລວມ ບໍ່ເອື້ອອໍານວຍຕໍ່ການຂະຫຍາຍຕົວຂອງບໍລິສັດ ແລະ ຈາກປັດໄຈພາຍໃນຂອງ

ບໍລິສັດຈົດທະບຽນເອງ ທີ່ມີການຄຸ້ມຄອງບໍລິຫານລາຍຮັບ-ລາຍຈ່າຍ ແລະ ຄວາມສ່ຽງບໍ່ໄດ້ດີເທົ່າທີ່ຄວນ ເຊິ່ງສົ່ງຜົນໃຫ້ຜົນການດໍາເນີນງານຫຼຸດລົງ ແລະ ຂາດທຶນໃນບາງບໍລິສັດ ເຮັດໃຫ້ບໍ່ສາມາດຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໄດ້. ຕໍ່ກັບສະພາບການດັ່ງກ່າວ, ຜູ້ລົງທຶນໄດ້ມີການເທຂາຍຮຸ້ນຂອງບໍລິສັດ ເຮັດໃຫ້ລາຄາຮຸ້ນປັບຕົວຫຼຸດລົງ. ນອກຈາກນີ້, ບາງບໍລິສັດຈົດທະບຽນໄດ້ນໍາໃຊ້ທຶນທີ່ລະດົມໄດ້ບໍ່ສອດຄ່ອງຕາມເປົ້າໝາຍການນໍາໃຊ້ທຶນທີ່ກໍານົດໄວ້ໃນໜັງສືຊວນຊື້ເທົ່າທີ່ຄວນ, ບໍ່ສາມາດເປີດເຜີຍຂໍ້ມູນເອກະສານລາຍງານການເງິນທັນຕາມກໍານົດເວລາ ເຊິ່ງສົ່ງຜົນກະທົບດ້ານລົບຕໍ່ຄວາມເຊື່ອໝັ້ນຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

ຮອດທ້າຍປີ 2019 ບັນຊີຜູ້ລົງທຶນພາຍໃນປະເທດ ມີຈໍານວນ 12.011 ບັນຊີ (ບຸກຄົນ 11.958 ແລະ ສະຖາບັນ 53) ແລະ ຕ່າງປະເທດ ຈໍານວນ 3.342 ບັນຊີ (ບຸກຄົນ 3.266 ແລະ ສະຖາບັນ 76) ເພີ່ມຂຶ້ນ 9,86% ແລະ 7,70% ທຽບໃສ່ປີ 2018 ຕາມລໍາດັບ.

ແຜນວາດ 4: ມູນຄ່າການຊື້-ຂາຍຮຸ້ນ ທຽບກັບ ດັດຊະນີຂອງ ຕລຊລ

ຫົວໜ່ວຍ: 1 ຕື້ກີບ




*ສາເຫດ ຍ້ອນມີການຊື້-ຂາຍຮຸ້ນລ໋ອດໃຫຍ່ ຂອງບໍລິສັດ LWPC.

ແຜນວາດ 5: ການເໜັງຕີງຂອງລາຄາຮຸ້ນ 11 ບໍລິສັດ ໃນ ຕລຊລ (1 ມັງກອນ 2011- 26 ທັນວາ 2019)

ຫົວໜ່ວຍ: ກີບ



## 2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ໃນການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໂດຍສະເພາະບໍລິສັດຫຼັກຊັບ (ປັດຈຸບັນ ມີ 4 ບໍລິສັດ), ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫືອໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ດ້ວຍຮູບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປີ ແລະ ລົງກວດກາກັບທີ່ປະຈຳປີ 2019 ຈຳນວນ 1 ຄັ້ງ. ຜ່ານການກວດກາ ເຫັນວ່າມີການເຄື່ອນໄຫວຕາມພາລະບົດບາດຂອງຕົນເປັນຢ່າງດີ ແຕ່ຍັງມີບາງບໍລິສັດຫຼັກຊັບ ປະຕິບັດບໍ່ສອດຄ່ອງກັບລະບຽບການເທົ່າທີ່ຄວນ.

ນອກຈາກນີ້, ໃນປີ 2019 ບໍລິສັດຫຼັກຊັບ ໄດ້ນຳໃຊ້ລະບົບສົ່ງຂໍ້ມູນທາງເອເລັກໂທຣນິກ ເພື່ອລາຍງານຂໍ້ມູນຕາມງວດເວລາ ໃຫ້ ສຄຄຊ ເຊິ່ງຜ່ານການນຳໃຊ້ລະບົບດັ່ງກ່າວ ໄດ້ຊ່ວຍໃຫ້ຂອດການລາຍງານມີຄວາມຊັດເຈນ, ຄ່ອງຕົວ ແລະ ວ່ອງໄວຂຶ້ນ. ນອກຈາກນີ້, ເພື່ອໃຫ້ການຄຸ້ມຄອງມີຄວາມຮັດກຸມ ແລະ ຄ່ອງຕົວຍິ່ງຂຶ້ນ ສຄຄຊ ໄດ້ນຳໃຊ້ຫຼັກການຄຸ້ມຄອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision). ພ້ອມນີ້, ໄດ້ອອກແຈ້ງເຕືອນບໍລິສັດຫຼັກຊັບ 3 ແຫ່ງ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນຕາມກົດໝາຍ Anti-money laundering (AML) ແນໃສ່ຮັບປະກັນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການຮ້າຍ.

ສຳລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ເພື່ອໃຫ້ບໍລິການໃນຂົງເຂດວຽກງານຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວຜ່ານທາງເອກະສານ ຢ່າງເປັນປົກກະຕິ ເຊິ່ງຜ່ານການຕິດຕາມກວດກາ ເຫັນວ່າ ມີການເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສອດຄ່ອງກັບລະບຽບການເປັນຢ່າງດີ. ພ້ອມນີ້, ໃນປີ 2019 ໄດ້ສຳເລັດການຕໍ່ອາຍຸໃບຮັບຮອງບໍລິສັດກວດສອບ 2 ແຫ່ງ, ຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃໝ່ 7 ແຫ່ງ ເຮັດໃຫ້ປັດຈຸບັນ ສະຖາບັນສື່ກາງດ້ານຫຼັກຊັບອື່ນ ມີທັງໝົດ 17 ບໍລິສັດ ຄື: ບໍລິສັດກວດສອບ 4 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ ຈຳນວນ 9 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ ແລະ ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື 1 ແຫ່ງ (ລາຍຊື່ລະອຽດຢູ່ໃນເອກະສານຊ້ອນທ້າຍ 2).

ນອກຈາກນີ້, ສຄຄຊ ໄດ້ຖືສຳຄັນການຄຸ້ມຄອງ ແລະ ພັດທະນານັກວິຊາຊີບ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ເຊິ່ງປັດຈຸບັນມີທັງໝົດ 73 ຄົນ ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 30 ຄົນ (ທີ່ປຶກສາທາງດ້ານການເງິນ 12 ຄົນ, ນາຍໜ້າຊື້-ຂາຍຫຼັກຊັບ 9 ຄົນ, ຜູ້ຄ້າຫຼັກຊັບ 3 ຄົນ ແລະ ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ 6 ຄົນ), ນັກວິຊາຊີບກວດສອບ 20 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 23 ຄົນ. ສຳລັບວຽກງານການພັດທະນານັກວິຊາຊີບ ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງການຝຶກອົບຮົມໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ ຢ່າງເປັນປົກກະຕິ ເຊິ່ງໄດ້ສຳເລັດການຈັດຫຼັກສູດທີ່ປຶກສາທາງດ້ານການເງິນຢ່າງມືອາຊີບ 1 ຄັ້ງ ແລະ ຈັດຝຶກອົບຮົມສຳມະນາທົບທວນລະບຽບການທີ່ກ່ຽວຂ້ອງ ໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ 1 ຄັ້ງ (Refresh) ເພື່ອຍົກລະດັບຄວາມຮູ້ຄວາມສາມາດພວກກ່ຽວ ແນໃສ່ຫັນໄປສູ່ຄວາມເປັນມືອາຊີບເທື່ອລະກ້າວ.

## 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 02/ນຍ[3] ກ່ຽວກັບການປັບປຸງຕົວຊີ້ວັດຂອງບົດລາຍງານການດຳເນີນທຸລະກິດ ຂອງ ສປປ ລາວ, ສຄຄຊ ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງໃນຂະແໜງຫຼັກຊັບ ຄື: ປັບປຸງຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ, ປັບປຸງຂໍ້ຕົກລົງວ່າດ້ວຍສະພາບໍລິຫານ, ປັບປຸງຄຳແນະນຳວ່າດ້ວຍການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ ແລະ ສ້າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດ

[3] ຄຳສັ່ງເລກທີ 02/ນຍ: ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

ທະບຽນ (ບັນດານິຕິກຳດັ່ງກ່າວໄດ້ຖືກຮັບຮອງໃນໄຕມາດ 2/2019). ການສ້າງ ແລະ ປັບປຸງ ນິຕິກຳດັ່ງກ່າວ ໄດ້ປັບປຸງດ້ານຕ່າງໆ ເພື່ອຮັບປະກັນການປົກປ້ອງຜູ້ລົງທຶນ ເປັນຕົ້ນແມ່ນ ວຽກງານການເປີດເຜີຍຂໍ້ມູນ, ຄວາມຮັບຜິດຊອບຂອງສະພາບໍລິຫານ, ສິດຂອງຜູ້ຖືຮຸ້ນ, ຄວາມເປັນເຈົ້າຂອງ ແລະ ການຄວບຄຸມ ແລະ ຄວາມໂປ່ງໃສ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ. ນອກຈາກນີ້, ຕິດພັນກັບການປັບປຸງນິຕິກຳທີ່ກ່ຽວຂ້ອງຂອງພາກສ່ວນອື່ນ, ສຄຄຊ ໄດ້ຄົ້ນຄວ້າ ແລະ ສັງລວມເນື້ອໃນບັນດານິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງພາກສ່ວນອື່ນ ເພື່ອສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາປັບປຸງນິຕິກຳດັ່ງກ່າວ. ເຖິງວ່າ ນິຕິກຳຫຼາຍອັນໄດ້ຮັບການປັບປຸງແລ້ວກໍ່ຕາມ ແຕ່ຜົນການປະເມີນຂອງທະນາຄານໂລກ ກ່ຽວກັບຕົວຊີ້ວັດການປົກປ້ອງຜູ້ລົງທຶນລາຍຍ່ອຍ ຢູ່ໃນລຳດັບທີ່ເພີ່ມຂຶ້ນ ຈາກ 174 ໃນປີ 2019 ມາເປັນ 179 ໃນປີ 2020 ສາເຫດຕົ້ນຕໍເນື່ອງຈາກການປັບປຸງນິຕິກຳຂອງຂະແໜງການອື່ນທີ່ຍັງບໍ່ທັນສຳເລັດ, ຈຳນວນບໍລິສັດທີ່ຈົດທະບຽນໃນ ຕລຊລ ບໍ່ເຖິງ 10 ແຫ່ງ, ປະເທດອື່ນມີການປັບປຸງນິຕິກຳທີ່ດີກວ່າ ສປປ ລາວ ແລະ ທະນາຄານໂລກໄດ້ປັບປຸງແບບສອບຖາມ ແລະ ວິທີການຄິດໄລ່ຄະແນນສຳລັບການປະເມີນຂອງປີ 2020.

ພ້ອມດຽວກັນນີ້, ສຄຄຊ ໄດ້ສ້າງຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມໃນກໍລະນີສົງໃສ ວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 4 ຊ່ອງທາງ ດັ່ງລຸ່ມນີ້:




- ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຫ້ອງການ ສຄຄຊ;
- ສົ່ງຂໍ້ມູນຜ່ານທາງໄປສະນີ;
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

## 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ

ໃນປີ 2019 ສຄຄຊ ໄດ້ເພີ່ມຄວາມເຂັ້ມງວດໃນການຕິດຕາມ ກວດກາການປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ ບາງບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການ ແລະ ໄດ້ອອກແຈ້ງເຕືອນ 3 ກໍລະນີ ແລະ ປະຕິບັດມາດຕະການປັບໃໝ 4 ກໍລະນີ.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ເພື່ອເຮັດໃຫ້ມວນຊົນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ, ສຄຄຊ ໄດ້ເອົາໃຈໃສ່ວຽກງານໂຄສະນາເຜີຍແຜ່ກ່ຽວກັບຕະຫຼາດທຶນຢ່າງຕັ້ງໜ້າ ໂດຍການປັບປຸງຮູບແບບການໂຄສະນາເຜີຍແຜ່ໃຫ້ມີຄວາມຫຼາກຫຼາຍ ແລະ ດຶງດູດຫຼາຍຂຶ້ນ. ໃນປີ 2019 ສຄຄຊ ໄດ້ຈັດກອງປະຊຸມເຜີຍແຜ່ລະບຽບການກ່ຽວຂ້ອງ ໃຫ້ບັນດາບໍລິສັດຈົດທະບຽນ 8 ຄັ້ງ ມີຜູ້ເຂົ້າຮ່ວມ 178 ທ່ານ, ທົບທວນລະບຽບກ່ຽວຂ້ອງກັບໃຫ້ບັນດານັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 1 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 27 ທ່ານ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ຫຼາຍພາກສ່ວນໃນສັງຄົມ ລວມຈຳນວນ 22 ຄັ້ງ (ນະຄອນຫຼວງວຽງຈັນ 16 ຄັ້ງ ແລະ ຕ່າງແຂວງ 6 ຄັ້ງ) ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 2.432 ເທື່ອຄົນ (ລື່ນປີ 2018 ຈຳນວນ 5 ຄັ້ງ). ນອກຈາກນີ້, ສຄຄຊ ກໍ່ໄດ້ເຂົ້າຮ່ວມການຕັ້ງບູດ (Booth) ເພື່ອເຜີຍແຜ່ຂໍ້ມູນຂ່າວສານໃນງານເປີດໂລກແຫ່ງການລົງທຶນ ປະຈຳປີ 2019 ທີ່ ຕລຊລ ໄດ້ຈັດຂຶ້ນ ຈຳນວນ 1 ຄັ້ງ.

ນອກນັ້ນ, ສຄຄຊ ຍັງໄດ້ສຳເລັດການຜະລິດສະປອດໂຄສະນາ, ກາຕູນເອນິເມຊັນ, ຂຽນບົດຄວາມ ແລະ ສຳພາດຜູ້ຊົງຄຸນວຸດທິ ໃນຫົວຂໍ້ຕ່າງໆຂອງວຽກງານຕະຫຼາດທຶນ ເພື່ອໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນແມ່ນ: ວາລະສານ, ໜັງສືພິມ, ເວັບໄຊທ໌ທະນາຄານແຫ່ງ ສປປ ລາວ ແລະ ສຄຄຊ, Facebook, Youtube ແລະ ວິທະຍຸ ແລະ ລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ". ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ສາມາດເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ

ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຫຼາຍຂຶ້ນ ເປັນຕົ້ນແມ່ນ ຄວາມເຂົ້າໃຈກ່ຽວກັບຮຸ້ນ, ການລົງທຶນ ແລະ ການເຄື່ອນໄຫວຂອງບໍລິສັດຈົດທະບຽນໃນ ຕລຊລ.

ພ້ອມນີ້, ເພື່ອເປັນການສ້າງພື້ນຖານແຫຼ່ງຂໍ້ມູນ, ບົດຮຽນ ແລະ ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ, ສຄຄຊ ໄດ້ສ້າງຫໍສະໝຸດຂະໜາດນ້ອຍຂຶ້ນ ແລະ ພ້ອມນໍາໃຊ້ຢ່າງເປັນລະບົບ ໃນຕົ້ນປີ 2020. ນອກຈາກນີ້, ເພື່ອເປັນການສ້າງໜໍ່ແໜງໃນການສ້າງຄູຝຶກສະເພາະດ້ານ ກ່ຽວກັບວຽກງານຫຼັກຊັບໃນອານາຄົດ, ສຄຄຊ ໄດ້ຮ່ວມມືກັບ ສະຖາບັນສົ່ງເສີມກໍາມະການບໍລິສັດໄທ (Thai IOD) ເພື່ອສ້າງຜູ້ບັນຍາຍໃນວຽກງານການຄຸ້ມຄອງບໍລິຫານ ໃນຕໍ່ໜ້າ.

ຮູບພາບ: ກາຕູນເອນິເມຊັນກ່ຽວກັບພາລະບົດບາດຂອງ ສຄຄຊ, ບັນຍາກາດການຖ່າຍທໍາລາຍການໂທລະພາບ "ເສັ້ນທາງ ສູ່ຕະຫຼາດທຶນລາວ" ແລະ  ການລົງໂຄສະນາເຜີຍແຜ່ກັບທີ່.









## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ວຽກງານຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ.

ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ຮ່ວມມືກັບ ຄຄຊ ສປ.ຈີນ, ສສ.ຫວຽດນາມ, ໄທ, ສ.ເກົາຫຼີ, ຍີ່ປຸ່ນ, ສະຖາບັນ IOD ໄທ, CPA ອົດສະຕາລີ, ສະຖາບັນຄົ້ນຄວ້າໂນມູລະ, ຕະຫຼາດຫຼັກຊັບໄທ ແລະ CISI London. ພາຍໃຕ້ການຮ່ວມມືດັ່ງກ່າວ ສາມາດຈັດສໍາມະນາຢູ່ນະຄອນຫຼວງວຽງຈັນ 9 ຄັ້ງ ແລະ ໄປຖອດຖອນບົດຮຽນຢູ່ບັນດາປະເທດດັ່ງກ່າວ 18 ຄັ້ງ ຈໍານວນ 82 ເທື່ອຄົນ. ພ້ອມນີ້, ສຄຄຊ ໄດ້ສູ້ຊົນເຮັດວຽກຮ່ວມກັບສະຖານທູດລຸກຊໍາບວກປະຈໍາ ສປປ ລາວ ໃນການກະກຽມຂໍທຶນສະໜັບສະໜູນ ຈາກກະຊວງການຕ່າງປະເທດລຸກຊໍາບວກ ເຂົ້າໃນການພັດທະນາຕະຫຼາດທຶນລາວຈົນສໍາເລັດການສ້າງບົດສະເໜີໂຄງການ LAO/031 ເຊິ່ງຄາດວ່າຈະໄດ້ເລີ່ມຈັດຕັ້ງປະຕິບັດໂຄງການໃນປີ 2020.

ໃນຮູບແບບຫຼາຍຝ່າຍ, ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ເປັນຕົ້ນແມ່ນ ກອງປະຊຸມໂຄງການການພັດທະນາຕະຫຼາດທຶນອາຊຽນ (ACMF Chair) ຄັ້ງທີ 30, ກອງປະຊຸມ ACMF Deputies ແລະ WC-CMD, ກອງປະຊຸມການພັດທະນາພື້ນຖານໂຄງລ່າງຂອງການຊໍາລະ-ສະສາງຂ້າມແດນ (CSIF) ຄັ້ງທີ 18, WC-FSL, WC-

CAL ແລະ ການພັດທະນາຕະຫຼາດພັນທະບັດອາຊຽນ (ABMF) ຄັ້ງທີ 31. ພາຍໃຕ້ການຮ່ວມມືດັ່ງກ່າວພະນັກງານ ສຄຄຊ ໄດ້ໄປຖອດຖອນບົດຮຽນຢູ່ບັນດາປະເທດດັ່ງກ່າວ 10 ຄັ້ງ ຈຳນວນ 12 ເທື່ອຄົນ.

ໃນຮູບແບບການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ຕິດພັນກັບວຽກງານຂອງອົງການ IOSCO ສຄຄຊ ໄດ້ຄົ້ນຄວ້າກະກຽມ ບັນດາເອກະສານທີ່ກ່ຽວຂ້ອງກັບການສະໝັກເຂົ້າເປັນສະມາຊິກສົມບູນ. ພ້ອມນີ້, ເພື່ອຮັບປະກັນທາງດ້ານເນື້ອໃນ ສຄຄຊ ໄດ້ສະເໜີຂໍຊ່ຽວຊານມາຊ່ວຍທົບທວນບັນດາເອກະສານດັ່ງກ່າວ. ຕິດພັນກັບການຮ່ວມມືໃນຂອບ IOSCO ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ 2019 ຂອງ IOSCO ຢູ່ປະເທດ ອົດສະຕຣາລີ, ກອງປະຊຸມປະຈຳປີ 2019 ຂອງຄະນະກຳມະການຕະຫຼາດໃໝ່ (GEMC) ຢູ່ສະຫະພັນຣັດເຊຍ ແລະ ກອງປະຊຸມຄະນະກຳມະການພາກພື້ນອາຊີ-ປາຊີຟິກ ຂອງ IOSCO, ຢູ່ປະເທດຍີ່ປຸ່ນ. ພາຍໃຕ້ການຮ່ວມມືດັ່ງກ່າວ, ສຄຄຊ ໄດ້ສົ່ງພະນັກງານເຂົ້າຮ່ວມສຳມະນາໃນຫົວຂໍ້ຕິດພັນ ຈຳນວນ 2 ຄັ້ງ 4 ເທື່ອຄົນ.

ຮູບພາບ: ຄະນະສະມາຊິກສະພາແຫ່ງຊາດ ໄປທັດສະນະສຶກສາຢູ່ຕະຫຼາດຫຼັກຊັບແຫ່ງປະເທດໄທ, ການເຂົ້າຮ່ວມກອງປະຊຸມ ACMF ແລະ ກອງປະຊຸມ IOSCO.












## 3. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ

### 3.1 ຂໍ້ສະດວກ

- ຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງຕໍ່ເນື່ອງ ຈາກ ຄຄຊ ແລະ ຄະນະຜູ້ອຳນວຍການ ທຫລ ຕໍ່ວຽກງານວິຊາສະເພາະ ຈຶ່ງເຮັດໃຫ້ ສຄຄຊ ມີການເຄື່ອນໄຫວຢ່າງໜັກແໜ້ນ;
- ຍ້ອນຄະນະ ແລະ ພະນັກງານວິຊາການຂອງ ສຄຄຊ ໄດ້ເປັນເຈົ້າການ ແລະ ຕັດສິນໃຈສູງໃນການຈັດຕັ້ງປະຕິບັດວຽກງານທີ່ຕົນໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ, ມີລະບອບແບບແຜນວິທີການເຮັດວຽກທີ່ຖືກຕ້ອງສອດຄ່ອງກັບຫຼັກການລວມສູນປະຊາທິປະໄຕ ແລະ ມີການຕິດຕາມກວດກາຢ່າງເປັນປົກກະຕິ;
- ຍ້ອນມີການບຳລຸງ-ກໍ່ສ້າງພະນັກງານຢ່າງມີເປົ້າໝາຍ, ມີການປະກອບສັບຊ້ອນ, ຈັດວາງຖືກຕ້ອງ, ມີການປັບປຸງກົງຈັກການຈັດຕັ້ງທີ່ສອດຄ່ອງ ແລະ ມີການປະຕິບັດນະໂຍບາຍທີ່ເໝາະສົມ;
- ຍ້ອນມີການປະສານງານຢ່າງໃກ້ຊິດ ແລະ ກົມກຽວ ກັບຂະແໜງການກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນເພື່ອຊຸກຍູ້ໃຫ້ການປະຕິບັດໜ້າທີ່ວຽກງານຢ່າງທັນການ ແລະ ມີຜົນຄືບໜ້າທີ່ແນ່ນອນ;
- ຍ້ອນໄດ້ຮັບການຮ່ວມມື ແລະ ຊ່ວຍເຫຼືອຈາກ ຄຄຊ  ແລະ ອົງການຈັດຕັ້ງຕ່າງໆ ທັງໃນພາກພື້ນ ແລະ ສາກົນ.

### 3.2 ຂໍ້ຫຍຸ້ງຍາກ

- ການຊຸກຍູ້ບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແມ່ນຍັງມີຄວາມຫຼ້າຊ້າ ແລະ ບໍ່ເປັນໄປຕາມແຜນການ ເນື່ອງຈາກ ສະພາບເສດຖະກິດໂດຍລວມຍັງອ່ອນນ້ອຍ ແລະ ພື້ນຖານການຜະລິດຍັງບໍ່ທັນເຂັ້ມແຂງ ບໍ່ເອື້ອອຳນວຍໃຫ້ແກ່ວິສາຫະກິດໃນການລະດົມທຶນເທົ່າທີ່ຄວນ. ພ້ອມນີ້, ຄວາມພ້ອມຂອງວິສາຫະກິດທັງພາກລັດ ແລະ ເອກະຊົນ ເມື່ອທຽບກັບເງື່ອນໄຂການລະດົມທຶນຜ່ານຕະຫຼາດທຶນ ເຫັນວ່າຍັງບໍ່ທັນສຸກງອມເທົ່າທີ່ຄວນ ເປັນຕົ້ນ: ດ້ານການເງິນ, ການຄຸ້ມຄອງບໍລິຫານ ແລະ ການຖືບັນຊີ ບໍ່ເປັນໄປຕາມລະບົບເຊິ່ງຕ້ອງໃຊ້ເວລາພໍສົມຄວນ ໃນການກະກຽມ;
- ການຄຸ້ມຄອງຕິດຕາມ ການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງ ຂອງບໍລິສັດຈົດທະບຽນ ຍັງບໍ່ທັນຕໍ່ເນື່ອງ ແລະຄວບຄຸມທຸກບັນຫາ, ເມື່ອພົບເຫັນບັນຫາແລ້ວ ການຄົ້ນຄວ້າວິທີການແກ້ໄຂ ຍັງບໍ່ທັນສະພາບການ ຍ້ອນວ່າ ກົນໄກ ແລະ ການຄຸ້ມຄອງຕິດຕາມຍັງບໍ່ເປັນລະບົບຄົບຊຸດ ແລະ ເຂັ້ມງວດເທົ່າທີ່ຄວນ, ບາງບັນຫາແມ່ນຕິດພັນກັບຫຼາຍພາກສ່ວນ;
- ການສ້າງ ແລະ ພັດທະນາຜະລິດຕະພັນໃໝ່ ຍັງມີຂໍ້ຈຳກັດ ເນື່ອງຈາກບາງຜະລິດຕະພັນພາຍຫຼັງຄົ້ນຄວ້າສຳເລັດແລ້ວບໍ່ສາມາດຈັດຕັ້ງປະຕິບັດໄດ້ ຍ້ອນເງື່ອນໄຂຂອງຕະຫຼາດພາຍໃນປະເທດ ຍັງບໍ່ທັນສຸກງອມເທົ່າທີ່ຄວນ;
- ການຈັດຕັ້ງປະຕິບັດແຜນແກ້ໄຂສະພາບຄ່ອງຂອງຕະຫຼາດຫຼັກຊັບລາວຍັງບໍ່ເປັນໄປຕາມແຜນເທົ່າທີ່ຄວນ ເນື່ອງຈາກບາງແຜນງານໂຄງການ ທີ່ໄດ້ຮັບຮອງໄປແລ້ວ ຍັງບໍ່ທັນແທດເໝາະກັບຄວາມເປັນຈິງຂອງຕະຫຼາດ;
- ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການຊື້-ຂາຍ ເພື່ອດຶງດູດຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ທັນໄດ້ຮັບການປະຕິບັດຢ່າງຕັ້ງໜ້າ ເນື່ອງຈາກການພັດທະນາວຽກງານດັ່ງກ່າວ ແມ່ນມີຕົ້ນທຶນສູງ ແລະ ເງື່ອນໄຂບາງດ້ານຍັງບໍ່ທັນສຸກງອມໃນການຈັດຕັ້ງປະຕິບັດ;
- ການໂຄສະນາເຜີຍແຜ່ວຽກງານຫຼັກຊັບ ໄດ້ຮັບການປັບປຸງດີຂຶ້ນ ແຕ່ເນື້ອໃນ ແລະ ວິທີການ ຍັງບໍ່ທັນຫຼາກຫຼາຍ ແລະແທດເໝາະກັບແຕ່ລະກຸ່ມເປົ້າໝາຍ.

## III. ທິດທາງແຜນການ ປີ 2020

### 1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍ ຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ບວກກັບ ໄພຂົ່ມຂູ່ຈາກທຳມະຊາດ, ໂລກລະບາດ ແລະ ບັນຫາອື່ນໆ ເຊິ່ງກອງທຶນການເງິນສາກົນ (IFC) ໄດ້ຄາດຄະເນອັດຕາການຂະຫຍາຍຕົວຂອງເສດຖະກິດໂລກ ຄາດວ່າຈະຫຼຸດລົງຫຼາຍ ຢູ່ໃນລະດັບ -3% ຈາກ 2,9% ໃນປີ 2019[4]. ເຖິງຢ່າງໃດກໍ່ຕາມ, ຄາດວ່າສະພາບການດັ່ງກ່າວ ຈະໄດ້ຮັບການແກ້ໄຂໃນທາງທີ່ດີຂຶ້ນ ແລະ ສະພາບຕະຫຼາດທຶນ ຄາດວ່າຈະຄ່ອຍໆປັບຕົວດີຂຶ້ນ ພາຍຫຼັງປະເທດຕ່າງໆປະຕິບັດມາດຕະການແກ້ໄຂທີ່ເໝາະສົມ.

### 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ຕະຫຼາດທຶນຂອງ ສປປ ລາວ ຄາດວ່າຈະໄດ້ຮັບຜົນກະທົບຈາກສະພາບການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ ແລະ ຂອງຕ່າງປະເທດ ທີ່ມີທ່າອ່ຽງຫຼຸດລົງເມື່ອທຽບໃສ່ຊຸມປີຜ່ານມາ; ການລະດົມທຶນເພີ່ມຂອງວິສາຫະກິດ ແລະ ຜົນການດຳເນີນງານຂອງບໍລິສັດຈົດທະບຽນ ອາດບໍ່ໄປຕາມແຜນການ; ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ອາດບໍ່ຄຶກຄື້ນເທົ່າທີ່ຄວນ. ເຖິງຢ່າງໃດກໍ່ຕາມ, ເພື່ອຫຼຸດຜ່ອນຜົນກະທົບດ້ານລົບຕໍ່ຕະຫຼາດທຶນລາວ ສຄຄຊ ຕ້ອງຄົ້ນຄວ້າມາດຕະການຜ່ອນຜັນດ້ານຕ່າງໆ ສຳລັບບໍລິສັດຈົດທະບຽນ ແລະ ສະຖາບັນດ້ານຫຼັກຊັບ; ສ້າງ ແລະ ປັບປຸງນິຕິກຳ ແລະ ກົນໄກດ້ານຕ່າງໆ ໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ ພ້ອມທັງ ປະສານພາກສ່ວນກ່ຽວຂ້ອງເພື່ອແກ້ໄຂບັນຫາອຸດຕັນວຽກງານຫຼັກຊັບ ເຊິ່ງລາຍລະອຽດໄດ້ສະແດງອອກໃນໜ້າວຽກຕົ້ນຕໍໃນປີ 2020.

### 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2020

#### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ໄດ້ຮຽກຮ້ອງໃຫ້ມີນິຕິກຳເພື່ອມາຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານອັນໃໝ່. ສຳລັບປີ 2020 ຄາດໝາຍ ແມ່ນໃຫ້ສຳເລັດການປະກາດນຳໃຊ້ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈາກປະທານປະເທດ ເພື່ອເປັນນິຕິກຳຕົ້ນຕໍໃນການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ ແລະ ສືບຕໍ່ເອົາໃຈໃສ່ ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວ.

ສຳລັບນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ, ສຄຄຊ ຈະຄົ້ນຄວ້າສະເໜີຕໍ່ລັດຖະບານພິຈາລະນາຍົກເວັ້ນການເກັບຄ່າທຳນຽມຊື້-ຂາຍຮຸ້ນໃນສ່ວນຂອງລັດຖະບານ ເພື່ອຫຼຸດຜ່ອນຕົ້ນທຶນຂອງຜູ້ລົງທຶນ ແລະ ສະເໜີສະພາແຫ່ງຊາດເພື່ອຕີຄວາມໝາຍມາດຕາ 82 ຂໍ້ 4 ຂອງກົດໝາຍວ່າດ້ວຍລັດຖະກອນ ກ່ຽວກັບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວຂອງພະນັກງານລັດຖະກອນ.

ພ້ອມນີ້, ເພື່ອຮັບປະກັນການຄຸ້ມຄອງ, ຕິດຕາມກວດກາ ແລະ ບັງຄັບໃຊ້ກົດໝາຍໃຫ້ມີປະສິດທິພາບຍິ່ງຂຶ້ນ ສຄຄຊ ຈະຄົ້ນຄວ້າສ້າງຄຳແນະນຳວ່າດ້ວຍ ກົນໄກການສືບສວນ-ສອບສວນ ແລະ ການປະຕິບັດມາດຕະການທາງບໍລິຫານໃນຂົງເຂດວຽກງານຫຼັກຊັບ ແນໃສ່ໃຫ້ການປະຕິບັດວຽກງານດັ່ງກ່າວມີຄວາມຄ່ອງຕົວຍິ່ງຂຶ້ນ.

---

[4] ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ (ເມສາ, 2020). "ຄາດຄະເນເສດຖະກິດໂລກ".

### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄົ້ນຄວ້າການສະເໜີອອກຈຳໜ່າຍຫຼັກຊັບ ຢ່າງໜ້ອຍ 2-3 ກໍລະນີ; ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອກະກຽມຄວາມພ້ອມຂອງລັດວິສາຫະກິດ ແລະ ເອກະຊົນ ໃຫ້ມີຄວາມເຂັ້ມແຂງ; ປັບປຸງເງື່ອນໄຂການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ເງື່ອນໄຂການຈົດທະບຽນໃນຕະຫຼາດຂັ້ນສອງ ເພື່ອໃຫ້ແທດເໝາະກັບເງື່ອນໄຂຂອງວິສາຫະກິດພາຍໃນປະເທດໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບັນດາບໍລິສັດຈົດທະບຽນ ໃຫ້ສອດຄ່ອງຕາມລະບຽບການ ເປັນຕົ້ນແມ່ນ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຫຼັກຊັບ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ ແລະ ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ. ນອກຈາກນັ້ນ, ຈະປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງນິຕິກຳກ່ຽວກັບການຂະຫຍາຍເວລາປະຕິບັດມາດຕະຖານດ້ານການລາຍງານການເງິນ (IFRS) ສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIE); ກະກຽມປະເມີນຄວາມພ້ອມການຈັດຕັ້ງປະຕິບັດ CG Guideline ແລະ ຄົ້ນຄວ້າສ້າງບັດປະເມີນການຈັດຕັ້ງປະຕິບັດ CG Guideline (Lao CG Scorecard), ເຜີຍແຜ່ ແລະ ຈັດຝຶກອົບຮົມ ເພື່ອສ້າງຄວາມເຂົ້າໃຈພື້ນຖານກ່ຽວກັບ ບົດແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ (CG Guideline) ໃຫ້ແກ່ບໍລິສັດຈົດທະບຽນ ແລະ ບໍລິສັດເປົ້າໝາຍຈົດທະບຽນ.

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ໂດຍການກວດກາທາງເອກະສານ ແລະ ລົງກວດກາກັບທີ່; ຊຸກຍູ້ ຕລຊລ ຕິດຕາມສະພາບການເໜັງຕີງຂອງລາຄາຮຸ້ນຂອງບັນດາບໍລິສັດຈົດທະບຽນ, ການຊື້-ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ແລະ ລາຍງານຜົນການຊື້-ຂາຍຫຼັກຊັບໃຫ້ແກ່ມວນຊົນຮັບຮູ້ຢ່າງເປັນປົກກະຕິ; ສືບຕໍ່ຄົ້ນຄວ້າຜະລິດຕະພັນຫຼັກຊັບທີ່ເໝາະສົມກັບຕະຫຼາດທຶນລາວ ເພື່ອສ້າງເງື່ອນໄຂໃຫ້ຜູ້ລົງທຶນສາມາດລົງທຶນໃນຫຼັກຊັບໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນ: ການນຳເອົາຮຸ້ນໄປເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ (DR) ພ້ອມທັງ ສ້າງກົນໄກ ເພື່ອຮອງຮັບການຈັດຕັ້ງປະຕິບັດ; ສືບຕໍ່ຄົ້ນຄວ້າ ແລະ ສ້າງເງື່ອນໄຂໃຫ້ແກ່ການສ້າງກະດານຊື້-ຂາຍຮຸ້ນຂອງບໍລິສັດຂະໜາດນ້ອຍ-ກາງ ເພື່ອໃຫ້ວິສາຫະກິດດັ່ງກ່າວ ສາມາດເຂົ້າເຖິງແຫຼ່ງທຶນຜ່ານຕະຫຼາດທຶນ.

### 3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄຸ້ມຄອງຕິດຕາມກວດກາການເຄື່ອນໄຫວ ຂອງສະຖາບັນສື່ກາງດ້ານຫຼັກຊັບຢ່າງເປັນປົກກະຕິ ຜ່ານການກວດກາທາງເອກະສານ ແລະ ລົງກວດກາກັບທີ່; ສ້າງປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດການຫຼັກການຄຸ້ມຄອງ ບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision) ສຳລັບພະນັກງານຂອງ ສຄຄຊ ແລະ ຊຸກຍູ້ບໍລິສັດຫຼັກຊັບຈັດຕັ້ງປະຕິບັດຕາມຫຼັກການດັ່ງກ່າວ. ນອກຈາກນີ້, ຈະຕິດຕາມບໍລິສັດຫຼັກຊັບໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນຕາມກົດໝາຍ AML ແລະ ຕິດຕາມຊຸກຍູ້ການປັບປຸງແກ້ໄຂບັນຫາຕາມຜົນການກວດກາປີ 2019 ຂອງບໍລິສັດຫຼັກຊັບ. ພ້ອມນີ້, ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄຸ້ມຄອງນັກວິຊາຊີບທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ເພື່ອຫັນພວກກ່ຽວໃຫ້ເຄື່ອນໄຫວຢ່າງມືອາຊີບ.

### 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ເພື່ອເປັນການປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ, ສຄຄຊ ຈະສືບຕໍ່ໂຄສະນາເຜີຍແຜ່ໃຫ້ມວນຊົນຊາບ ກ່ຽວກັບວຽກງານຕະຫຼາດທຶນ, ປັບປຸງຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ໃຫ້ກວ້າງຂວາງຂຶ້ນກວ່າເກົ່າ. ເພື່ອປະຕິບັດຕາມຄຳສັ່ງ 02/ນຍ ສຄຄຊ ຈະຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ

ໃນຂົງເຂດວຽກງານຫຼັກຊັບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ກ່ຽວຂ້ອງກັບພາກສ່ວນອື່ນທີ່ຕິດພັນກັບວຽກງານດັ່ງກ່າວ ໃຫ້ສຳເລັດຕາມແຜນທີ່ໄດ້ກຳນົດໄວ້ ເພື່ອໃຫ້ຕົວຊີ້ວັດດັ່ງກ່າວ ໄດ້ຮັບການປັບປຸງດີຂຶ້ນ.

### 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສືບຕໍ່ໂຄສະນາເຜີຍແຜ່ວຽກງານຫຼັກຊັບ ໂດຍປັບປຸງເນື້ອໃນ ແລະ ຮູບແບບໂຄສະນາ ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍຜ່ານຊ່ອງທາງໂຄສະນາຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ໂດຍສະເພາະ ຈະລົງເລິກຄົ້ນຄວ້າສ້າງກາຕູນເອນິເມຊັນເພື່ອເປັນເຄື່ອງມືສື່ສານທີ່ໜ້າສົນໃຈ ແລະ ເຂົ້າໃຈງ່າຍ ກ່ຽວກັບວຽກງານຕະຫຼາດທຶນ ສຳລັບມວນຊົນ; ສືບຕໍ່ຈັດຕັ້ງປະຕິບັດຕາມແຜນການຮ່ວມມືກັບ ສະຖາບັນສົ່ງເສີມກຳມະການບໍລິສັດໄທ (IOD) ໃນການກໍ່ສ້າງຄູຝຶກສະເພາະດ້ານ ກ່ຽວກັບວຽກງານຫຼັກຊັບ ເພື່ອເປັນຜູ້ສົ່ງຕໍ່ຄວາມຮູ້ ແລະ ປະສົບການ ໂດຍສະເພາະກ່ຽວກັບວຽກງານການຄຸ້ມຄອງບໍລິຫານ ໃຫ້ແກ່ຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ແນໃສ່ຜູ້ບໍລິຫານຂອງບໍລິສັດຈົດທະບຽນ ຫັນໄປສູ່ຄວາມເປັນມືອາຊີບເທື່ອລະກ້າວ.

### 3.7 ການຮ່ວມມືສາກົນ

ເພື່ອຍົກສູງການພັດທະນາວຽກງານຕະຫຼາດທຶນ ສປປ ລາວ, ສຄຄຊ ຈະສືບຕໍ່ຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍເປັນຕົ້ນແມ່ນ: ຄຄຊ ສ.ປ ຈີນ, ຄຄຊ ສສ.ຫວຽດນາມ, ກລຕ ໄທ, ຄຄຊ ສ.ເກົາຫຼີ, ຍີ່ປຸ່ນ, CPA Australia, IOD ໄທ ແລະ ອື່ນໆ; ສືບຕໍ່ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ເປັນຕົ້ນແມ່ນ: ການຮ່ວມມືໃນການພັດທະນາຕະຫຼາດທຶນໃນຂອບ 5 ປະເທດເຂດແມ່ນ້ຳຂອງ ແລະ ການຮ່ວມມືໃນຂອບອາຊຽນ ພ້ອມທັງຄົ້ນຄວ້າຄວາມເປັນໄປໄດ້ ໃນການຈັດຕັ້ງປະຕິບັດໂຄງການເຊື່ອມໂຍງຕ່າງໆ ໃນຂອບຕະຫຼາດທຶນອາຊຽນ; ສືບຕໍ່ຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ອົງການ IFC, ກຸ່ມທະນາຄານໂລກ ແລະ ການກະກຽມຄວາມພ້ອມຮອບດ້ານ ໃນການສະເໜີເປັນສະມາຊິກສົມບູນຂອງອົງການ IOSCO ແລະ ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ແລະ ອື່ນໆ. ພ້ອມນີ້, ຈະສູ້ຊົນໃຫ້ໄດ້ຈັດຕັ້ງປະຕິບັດໂຄງການຮ່ວມມືຊ່ວຍເຫຼືອຈາກກະຊວງການຕ່າງປະເທດຂອງລຸກຊຳບວກ (LAO/032) ຕາມແຜນການ.

# ຂໍ້ມູນຕິດຕໍ່

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

PO. Box: 19

Phone: (856-21) 217770

Fax: (856-21) 217806

E-mail: lsco@lsc.gov.la

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602

Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

Youtube: ລາຍການ ເສັ້ນທາງສູ່ຕະຫຼາດທຶນລາວ.

# ເອກະສານຊ້ອນທ້າຍ

## 1) ລາຍຊື່ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວທັງໝົດ (ຮອດທ້າຍປີ 2019)

| ລຳດັບ | ລາຍຊື່ | ຊື່ຫຍໍ້ | ເບີໂທຕິດຕໍ່ |
|---|---|---|---|
| 1 | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | ທຄຕລ ຫຼື BCEL | 021 213 200 |
| 2 | ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ | ຜ-ຟຟລ ຫຼື EDL-GEN | 021 316 142 |
| 3 | ບໍລິສັດ ລາວເວີນ ມະຫາຊົນ | ລວມຊ ຫຼື LWPC | 021 415 477 |
| 4 | ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | ປທລ ຫຼື PTL | 021 264 834 |
| 5 | ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ | ສ.ວ.ນ ຫຼື SVN | 021 415 645 |
| 6 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | ພກພ ຫຼື PCD | 021 265 394 |
| 7 | ບໍລິສັດ ຊີມັງລາວ ມະຫາຊົນ | ບຊລ ຫຼື LCC | 021 412 111 |
| 8 | ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ | ມຫທຊ ຫຼື MHTL | 021 418 062-6 |
| 9 | ບໍລິສັດ ລາວອາໂກຣເທັກ ມະຫາຊົນ | ລອທ ຫຼື LAT | 021 520 715 |
| 10 | ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ | ວຈຊຕ ຫຼື VCL | 021 288 299 |
| 11 | ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ | ລອຊ ຫຼື LALCO | 021 410 551 |

## 2) ລາຍລະອຽດຂອງສະຖາບັນສື່ກາງດ້ານຫຼັກຊັບ

| ປະເພດສະຖາບັນສື່ກາງ | ລຳດັບ | ຊື່ບໍລິສັດ | ເບີໂທຕິດຕໍ່ |
|---|---|---|---|
| ບໍລິສັດຫຼັກຊັບ | 1 | ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ | 021 265 477 |
| | 2 | ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ | 021 265 468 |
| | 3 | ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ | 021 419 222 |
| | 4 | ບໍລິສັດ ເອພີເອັມ ລາວ ຈຳກັດ | 021 253 418 |
| ບໍລິສັດກວດສອບ | 1 | ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) | 021 222 717 |
| | 2 | ບໍລິສັດ ເຄພີເອັມຈີລາວ ຈຳກັດ | 021 454 240 |
| | 3 | ບໍລິສັດ ເອີນ ແອນ ຢັງ (ລາວ) ຈຳກັດ | 021455 077 |
| | 4 | ບໍລິສັດ ດີລອຍ (ລາວ) ຈຳກັດ | 021 419 300 |
| ບໍລິສັດປະເມີນມູນຄ່າຊັບສິນ | 1 | ບໍລິສັດ ຊີມ ພອບເພີຕີ້ ຄອນເຊົາເທັ້ນ ຈຳກັດ | +662 5304333 |
| | 2 | ບໍລິສັດ ລາວປະເມີນຊັບສິນ ຈຳກັດ | 030 5080163 |
| | 3 | ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ | 020 97799508 |
| | 4 | ບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ | 020 55716119 |
| | 5 | ບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ | 020 55569999 |
| | 6 | ບໍລິສັດ ລາວ ເຈົ້ງຊີນ ປະເມີນມູນຄ່າຊັບສິນ ຈຳກັດ | 020 54542169 |
| | 7 | ບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນ ຈຳກັດ | 020 22229744 |
| | 8 | ບໍລິສັດ ຣິດແອບໄພຣໂຊ ຈຳກັດ | +6662 5156090 |
| | 9 | ບໍລິສັດ ເຄເຄ ລາວ ປະເມີນມູນຄ່າຊັບສິນ ຈຳກັດ | 020 55655753 |

| | | | |
|---|---|---|---|
| **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື** | 1 | ບໍລິສັດ TRIS Rating Co., Ltd | +66 2098 3035 |
| **ທະນາຄານດູແລຊັບສິນ** | 1 | ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ | 021 213 560 |
| | 2 | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ | 021 258 888 |
| | 3 | ທະນາຄານ ແຫ່ງປະເທດຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ | 021 228 888 |

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທີ່ຢູ່: ບ້ານໂພນສະອາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ໂທ: +(856-21) 217 770

ເວັບໄຊທ: https://www.lsc.gov.la

ອີເມລ໌: Lsc@lsc.gov.la